# ມິຊຊາອາທິດທີ 4 ກຳນົດພຣະກຣິສຕະຄົມ ປີ C
# ວັນອາທິດທີ 23 ທັນວາ 2018



**ພຣະວໍລະສານໂດຍນັກບຸນລູກາ 1, 39-45**

ໃນເວລານັ້ນ, ພຣະນາງມາຣີອາໄດ້ຟ້າວຮີບອອກເດີນທາງໄປເມືອງໜຶ່ງໃນແຖບພູແຂວງຢູເດ. ພຣະນາງເຂົ້າໄປໃນເຮືອນຂອງຊາກາຣີແລະຄຳນັບຖາມຂ່າວນາງເອລີຊາແບັດ.

ພໍແຕ່ນາງເອລີຊາແບັດໄດ້ຍິນຄຳຖາມຂ່າວ, ບຸດໃນອຸທອນຂອງນາງກໍເໜັງຕີງ ແລະນາງເອລີຊາແບັດກໍເຕັມພຽບດ້ວຍພຣະຈິດເຈົ້າຈຶ່ງຮ້ອງຂຶ້ນວ່າ: ພຣະນາງມີບຸນລື່ນຍິ່ງໃດໆແລະບຸດອຸທອນພຣະນາງເປັນເຈົ້າຈອມບຸນ. ເຫດໃດພຣະມານດາຂອງພຣະອົງເຈົ້າຂອງຂ້າພະເຈົ້າຈຶ່ງສະເດັດມາຫາຂ້າພະເຈົ້າດັ່ງນີ້? ພໍແຕ່ຄຳຄຳນັບຖາມຂ່າວຂອງພຣະນາງເຖິງຫູຂ້າພະເຈົ້າ, ບຸດໃນອຸທອນຂອງຂ້າພະເຈົ້າກໍເໜັງຕີງດ້ວຍຄວາມຍິນດີ. ບຸນລາບແກ່ພຣະນາງທີ່ໄດ້ເຊື່ອວ່າສິ່ງທີ່ພຣະເປັນເຈົ້າຊົງບອກກັບພຣະນາງນັ້ນຈະສຳເລັດບໍລິບູນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 1, 39-45**

ວັນເວລາແຫ່ງການສະເດັດມາຂອງພຣະວາຈານາດຮັບເອົາກາຍມາເກີດເປັນມະນຸດໃກ້ຈະມາເຖິງແລ້ວ. ຍັງແຕ່ພຽງວັນດຽວເທົ່ານັ້ນພວກເຮົາກໍສະຫລອງການບັງເກີດມາຂອງພຣະບຸດພຣະເຈົ້າ. ການສະເດັດມາຂອງພຣະອົງເປັນການນໍາເອົາຄວາມຍິນດີ, ຄວາມຫວັງ,ຄວາມຣອດມາໃຫ້ມະນຸດ. ດັ່ງທີ່ພວກເຮົາໄດ້ຟັງໃນວາຈາຂອງພຣະເຈົ້າວັນນີ້ທີ່ກ່າວເຖິງພຣະນາງມາຣີອາມານດາຂອງພຣະບຸດພຣະເຈົ້າທີ່ຟ້າວອອກເດີນທາງໄປຢ້ຽມຢາມນາງເອລີຊາແບັດຜູ້ເປັນຍາດຕິພີ່ນ້ອງຂອງພຣະນາງ.

ການທີ່ພຣະນາງມາຣີອາໄປຢ້ຽມຢາມນາງເອລີຊາແບັດນີ້ ບໍ່ພຽງແຕ່ແມ່ນການໄປພົບພໍ້ຖາມສະບາຍແລະໃຫ້ກໍາລັງໃຈນາງເອລີຊາແບັດທີ່ພວມຖືພາເປັນເວລາຫົກເດືອນເທົ່ານັ້ນ, ແຕ່ການມາຢ້ຽມຢາມຂອງພຣະນາງມາຣີອານີ້ຍັງມີສິ່ງໜຶ່ງທີ່ປະເສີດນັ້ນຄືພຣະນາງໄດ້ນໍາພຣະບຸດຂອງພຣະເຈົ້າທີ່ຢູ່ໃນອຸທອນຂອງພຣະນາງມາໃຫ້ນາງເອລີຊາແບັດ. ແລະບໍ່ພຽງແຕ່ນາງເອລີຊາແບັດທີ່ສໍາພັດໄດ້ເຖິງຄວາມຍິນດີທີ່ໄດ້ຕ້ອນຮັບມານດາຂອງພຣະບຸດພຣະເຈົ້າເທົ່ານັ້ນ ແຕ່ບຸດໃນອຸທອນຂອງນາງເອລີຊາແບັດກໍດິ້ນດັ້ນສະແດງອອກເຖິງຄວາມຍິນດີນີ້ເຊັ່ນດຽວກັນ. ຄວາມຍິນດີຂອງພຣະນາງມາຣີອາແລະນາງເອລີຊາແບັດພ້ອມທັງບຸດຂອງນາງຈະເປັນຄວາມຍິນດີຂອງພວກເຮົາກໍຕໍ່ເມື່ອພວກເຮົາມີຄວາມພ້ອມທີ່ຈະຕ້ອນຮັບຄວາມຍິນດີນີ້.

ດັ່ງນັ້ນພຣະກຣິສຕະຈັກຈຶ່ງໃຫ້ເວລາພວກເຮົາໃນຊ່ວງສີ່ອາທິດແຫ່ງການຕຽມຈິດໃຈ, ແຫ່ງການດັດແປງເສັ້ນທາງຊີວິດຂອງພວກເຮົາທີ່ຍັງບໍ່ທັນຊື່ກົງ, ບ່ອນທີ່ຍັງເປັນໂນນເປັນຂຸມໃນຊີວິດຂອງພວກເຮົາໃຫ້ຮາບພຽງເພື່ອພວກເຮົາຈະໄດ້ພ້ອມທີ່ຈະເຫັນແລະຮັບເອົາອົງຜູ້ບັນດານຄວາມຣອດເຂົ້າມາໃນຊີວິດຂອງພວກເຮົາ. ແລະເປັນຕົ້ນພວກເຮົາຈະໄດ້ເອົາແບບຢ່າງຂອງພຣະນາງມາຣີອາຄືການນໍາເອົາອົງພຣະບຸດຕຣາຂອງພຣະເຈົ້າ, ອົງແຫ່ງຄວາມຣອດ, ຄວາມຍິນດີນີ້ໄປໃຫ້ຄົນອື່ນ: ຄົນທີ່ຍັງບໍ່ຮູ້ຈັກພຣະອົງ, ຄົນທີ່ຢູ່ໃນຄວາມໂດດດ່ຽວສິ້ນຫວັງ, ຄົນທີ່ຍັງຢູ່ໃນຫົ່ມເງົາແຫ່ງຄວາມມືດຍ້ອນຄວາມມົວເມົານໍາສິ່ງຂອງໆໂລກ. ເພື່ອວ່າທຸກຄົນຈະໄດ້ຮັບຄວາມຣອດທີ່ມາຈາກພຣະບຸດຂອງພຣະເຈົ້າໃນວັນບຸນໂນແອນທີ່ຈະມາເຖິງນີ້.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ລົງມາເກີດໃນຈິດໃຈຂອງພວກເຮົາ ເໝືອນກັບພຣະວາຈານາດໄດ້ລົງມາຮັບເອົາກາຍໃນອຸທອນຂອງພຣະນາງມາຣີອາ ເພື່ອພຣະວານາດແຫ່ງຄວາມຣອດແລະຄວາມຍິນດີນີ້ຈະຊ່ວຍພວກເຮົາໃຫ້ພົບກັບຄວາມສຸກທີ່ແທ້ຈິງອັນແມ່ນການໄດ້ຮັບຄວາມຣອດຈາກພຣະເຈົ້າ. ແລະເປັນຕົ້ນພວກເຮົາຈະໄດ້ກາຍເປັນເຄື່ອງມືຂອງພຣະເຈົ້າເພື່ອນໍາເອົາຄວາມສຸກຄວາມຍິນດີແລະຄວາມຣອດນີ້ໄປໃຫ້ທຸກຄົນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ